ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ.....15...../ຈຂ.ຊຂ

ວັນທີ..14../..07../..2017

# ຄຳສັ່ງແນະນຳ

## ກ່ຽວກັບ ການກວດກາ, ປະເມີນ ແລະ ປັບປຸງ

## ສັນຍາເຊົ່າ - ສຳປະທານ ແລະ ການຄຸ້ມຄອງນຳໃຊ້ດິນຂອງລັດ

**ເຖິງ**: ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ບັນດາເມືອງ ແລະ ບັນດາບໍລິສັດຕ່າງໆ ທີ່ມີການພົວພັນເຊົ່າ, ສຳປະທານ ແລະ ນຳໃຊ້ດິນຂອງລັດ ຢູ່ພາຍໃນແຂວງ.

**ເລື່ອງ**: ໃຫ້ເພີ່ມທະວີເອົາໃຈໃສ່ກວດກາ, ປະເມີນ ແລະ ປັບປຸງບັນດາສັນຍາເຊົ່າ-ສຳປະທານ ແລະ ການຄຸ້ມຄອງນຳໃຊ້ທີ່ດິນຂອງລັດ ຢູ່ພາຍໃນແຂວງ.

- ອີງຕາມ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ລະບຸໄວ້ໃນພາກທີ III, ໝວດທີ 4 ມາດຕາ 20 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງໃສ່ ເນື້ອໃນ ແລະ ການເຫັນດີເປັນເອກະພາບ ຂອງກອງປະຊຸມປົກຄອງທ້ອງຖິ່ນ ຄັ້ງວັນທີ 17 ພຶດສະພາ 2017 ເຫັນດີໃຫ້ກວດກາ, ປະເມີນ ແລະ ປັບປຸງບັນດາສັນຍາເຊົ່າ, ສຳປະທານ ແລະ ນຳໃຊ້ດິນຂອງລັດຄືນໃໝ່, ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການຂອງລັດວາງອອກ.
- ອີງຕາມ ສະພາບຄວາມເປັນຈິງໃນການຄຸ້ມຄອງ ແລະ ນຳໃຊ້ດິນຂອງລັດໃນໄລຍະທີ່ຜ່ານມາ ການອະນຸຍາດບໍ່ຖືກກັບພາລະບົດບາດ, ການນຳໃຊ້ບໍ່ຖືກກັບເປົ້າໝາຍ, ອັດຕາການເຊົ່າ ແລະ ສຳປະທານດິນຂອງລັດຕ່ຳ ແລະ ລາຍຮັບຂອງລັດຍັງມີໜ້ອຍ.

ສະນັ້ນ, ເພື່ອເຮັດໃຫ້ການບໍລິຫານຄຸ້ມຄອງ ແລະ ການເຊົ່າ-ສຳປະທານດິນຂອງລັດ ຖືກຕ້ອງຕາມພາລະບົດບາດ, ສອດຄ່ອງຕາມລະບຽບການ ແລະ ຮັບປະກັນໃຫ້ແກ່ການເກັບລາຍຮັບຈາກການນຳໃຊ້ທີ່ດິນໃຫ້ແກ່ລັດໃຫ້ມີປະສິດທິຜົນ.

**ເຈົ້າແຂວງ, ແຂວງຊຽງຂວາງ ມີຄຳສັ່ງແນະນຳດັ່ງນີ້:**

1. ເຫັນດີໃຫ້ດຳເນີນກວດກາ ແລະ ປະເມີນການນຳໃຊ້ດິນຂອງລັດຄືນທັງໝົດ ເປັນຕົ້ນແມ່ນບັນດາບໍລິສັດພາຍໃນ, ບໍລິສັດຕ່າງປະເທດ, ບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ນຳໃຊ້ດິນຂອງລັດ ລົງທຶນພັດທະນາເພື່ອຈຸດປະສົງຕ່າງໆ ນັບທັງໂຄງການທີ່ມີການອະນຸຍາດ, ມີສັນຍາ, ບໍ່ມີສັນຍາ ແລະ ບໍ່ມີການຕົກລົງອະນຸຍາດ.

2. ບັນດາໂຄງການເຊົ່າ ແລະ ສຳປະທານທີ່ດິນຂອງລັດ ທີ່ໄດ້ຮັບອະນຸຍາດຈາກເຈົ້າແຂວງ ແລະ ມີສັນຍາແຕ່ການຕົກລົງອະນຸຍາດ ແລະ ການເຮັດສັນຍາເຊົ່າ-ສຳປະທານຫາກບໍ່ສອດຄ່ອງ, ໝົດອາຍຸສັນຍາ, ອັດຕາຄ່າເຊົ່າ ແລະ ອັດຕາຄ່າສຳປະທານບໍ່ຖືກຕ້ອງຕາມລະບຽບການ, ບໍ່ໄດ້ຈ່າຍຄ່າພັນທະໃຫ້ລັດໃນໄລຍະທີ່ຜ່ານມາ ຫຼື ຢຸດຕິບໍ່ດຳເນີນກິດຈະການຜ່ານມາແລ້ວ ແມ່ນໃຫ້ປັບປຸງສັນຍາໃຫ້ສອດຄ່ອງຕາມລັດຖະບັນຍັດ ຂອງປະທານປະເທດ ສະບັບເລກທີ 02/ປປທ, ລົງວັນທີ 18 ພະຈິກ 2009 ແລະ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 135/ນຍ, ລົງວັນທີ 25 ພຶດສະພາ 2009 ແລະ ໃຫ້ລົບລ້າງບັນດາໂຄງການທີ່ບໍ່ໄດ້ເຄື່ອນໄຫວຜ່ານມາ ແລະ ບໍ່ສາມາດດຳເນີນໄປຕໍ່ໄດ້ຢ່າງເຂັ້ມງວດ.

- ສຳລັບໂຄງການທີ່ບໍ່ໄດ້ຮັບອະນຸຍາດ ແລະ ບໍ່ມີສັນຍາແມ່ນໃຫ້ຄົ້ນຄວ້າເກັບກຳຂໍ້ມູນ ພ້ອມທັງມີມາຕະການປັບໄໝ ແລະ ໃຫ້ຢຸດຕິກິດຈະການຢ່າງເດັດຂາດ.

3. ກ່ຽວກັບເອກະສານຂອງລັດ ທີ່ອະນຸຍາດໃຫ້ບັນດາບໍລິສັດ, ນັກລົງທຶນ, ບຸກຄົນ ແລະ ນິຕິບຸກຄົນ ເພື່ອເຊົ່າ ແລະ ສຳປະທານທີ່ດິນຂອງລັດຜ່ານມາ ແລະ ທີ່ຈະປະຕິບັດຕໍ່ໄປ ແມ່ນຕ້ອງມີຂໍ້ຕົກລົງ ຂອງເຈົ້າ ແຂວງ, ມີໃບອະນຸຍາດລົງທຶນຈາກພະແນກແຜນການ ແລະ ການລົງທຶນແຂວງ ແລະ ເຮັດສັນຍາເຊົ່າ-ສຳປະທານທີ່ດິນກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ໂດຍໄດ້ຮັບຄວາມເຫັນດີເປັນເອກະພາບກັບອຳນາດການປົກຄອງເມືອງ ແລະ ບ້ານ ຈຶ່ງອະນຸຍາດໃຫ້ລົງມືປະຕິບັດໄດ້ (ຫ້າມລົງມືປະຕິບັດກ່ອນ) ຈຶ່ງຖືວ່າຖືກຕ້ອງ. ສ່ວນກົມກອງ, ພະແນກການອື່ນ, ຂັ້ນເມືອງ ແລະ ນາຍບ້ານ ບໍ່ໃຫ້ອະນຸຍາດເຊົ່າ ແລະ ສຳປະທານດິນຂອງລັດ.

4. ຜ່ານຈາກການກວດກາ ແລະ ປະເມີນການນຳໃຊ້ທີ່ດິນຂອງລັດ ເຫັນວ່າໂຄງການໃດ ມີການປະກອບເອກະສານບໍ່ສອດຄ່ອງຕາມລະບຽບການ, ເນື້ອໃນສັນຍາເປັນຊ່ອງວ່າງ, ລັດບໍ່ໄດ້ຮັບຜົນປະໂຫຍດ, ແມ່ນມອບໃຫ້ພະແນກຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ ເປັນເຈົ້າການເພື່ອປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ເມືອງຕ່າງໆ ໃນການປັບປຸງແກ້ໄຂໃຫ້ທັນເວລາ ແລະ ພະແນກການເງິນແຂວງ ຄິດໄລ່ເກັບລາຍຮັບເຂົ້າງົບປະມານຂອງລັດ ໃຫ້ຄົບຖ້ວນຕາມຄຳສັ່ງແນະນຳສະ ບັບນີ້.

ດັ່ງນັ້ນ, ເຈົ້າແຂວງ ແຂວງຊຽງຂວາງ ຈຶ່ງໄດ້ມີຄຳສັ່ງແນະນຳສະບັບນີ້ ເພື່ອແຈ້ງໃຫ້ບັນດາພະແນກການ, ກົມກອງ, ບັນດາບໍລິສັດ, ຜູ້ປະກອບການຕ່າງໆ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ເພື່ອຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ເຂັ້ມງວດ.

ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດ ແລະ ຈັດຕັ້ງປະຕິບັດໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ດຣ. ຄຳປາວ

Dr. Khampao